Social Events!!!

# ຂ່າວສັງຄົມ

**ຝ່າຍຂອງສັງຄົມລາວ ທີ່ເປັນເໝືອນເງົາຕາມຕົວ**
ໂດຍສະເພາະກັບການເຕົ້າໂຮມເພື່ອເຮັດບຸນສິລກິນທານຕາມວັດວາອາຣາມທີ່ເປັນກິຈວັຕຂອງຜູ້ທີ່ນັບຖືພຸທສາສນາງານເຫລົ່ານີ້ເຖິງຈະຜ່ານມາແລ້ວແຕ່ກໍຍັງເປັນທີ່ປະທັບໃຈສຳຫລັບການໄດ້ເຂົ້າໄປຮ່ວມທຳບຸນສິລກິນທານຮ່ວມກັນ "ພາບນີ້ເກັບມາໄດ້ຈາກງານບຸນທີ່ວັດພຸທທະເມດຕາທັມ" ເມືອງໂມຣີໂນວານເລຣັຖຄາລີຟໍເນັຽສະຫະຣັຖອະເມຣິກາ...



ການທຳບຸນຕັກບາດທຳແລ້ວຈິດໃຈກໍໂປ່ງໃສເກີດຄວາມສຸຂໃຈມີຄວາມຫວັງແລະເຮັດໃຫ້ຊີວິດຍືນຍາວຕໍ່ໄປຕື່ມ...










ຫລານນ້ອຍ "ດາລີນາ ພອນໄຊຍ໌" ຜູ້ຊຶ່ງມີແວວທາງດ້ານສິລປະວັນນະຄະດີມາຕັ້ງແຕ່ນ້ອຍຮູ້ແລະເຂົ້າໃຈໃນຄວາມໝາຍຂອງການນົບໄຫວ້ ແລະຮ່ວມໃສ່ບາດຢາດນ້ຳເປັນເໝືອນຜູ້ໃຫຍ່ຊຶ່ງກໍເປັນທີ່ຊື່ນຊົມຍິນດີຂອງຜູ້ຄົນທີ່ໄດ້ພົບເຫັນ ອານາຄົດຈະໄປໄດ້ໄກທາງດ້ານການຮຽນກັບສິ່ງທີ່ມັກດ້ວຍບຸນວາສນາຍູ້ສົ່ງ.



ງານນີ້ຈັດຂຶ້ນໂດຍຍານາງກິນນາລອນ ເພື່ອຄວາມສຸຂຂອງ ຄົນທີ່ນາງຮັກ ໄດ້ຈ້າງນາງລຳມາເຕັ້ນໂຊວ໌ໃຫ້ກັບແຂກທີ່ເຂົ້າ ຮ່ວມຢ່າງມີຄວາມສຸຂເບີກບານ... ບັນດາບ່າວນ້ອຍບ່າວໃຫຍ່ ພາກັນຊື່ນຊົມກັບລີລາການເຕັ້ນທີ່ແປກແຫວກແນວຂອງສາວ ງາມຢ່າງເຕັມອີ່ມພາຍໃຕ້ບັນຍາກາດເຫລົ້າຢາປາປີ້ງຄຶບຄັ່ງ



ງານນີ້ກໍເປັນອີກງານນຶ່ງທີ່ມີຜູ້ຄົນເຂົ້າໄປຮ່ວມຢ່າງຄັບຄາໜາແໜ້ນ ເປັນງານບຸນພຣະເວດປະຈຳປີທີ່ຈັດຂຶ້ນຢູ່ທີ່ເມືອງຟີນິກຣັຖອາຣີໂຊນາ ພາບທີ່ເຫັນແມ່ນຍາລູງວົງສຸຣິປັນຍາ ແລະພັລະຍາຂອງເພິ່ນຊຶ່ງເປັນ ຫົວເຣືອໃຫຍ່ໃນການນຳພາພີ່ນ້ອງຊາວລາວຢູ່ໃນຂົງເຂດນີ້ເຂົ້າມາທຳ ບຸນຢ່າງລົ້ນຫລາມ...

# ຂ່າວສັງຄົມ



ພາບທີ່ໜ້າປະທັບໃຈນີ້ເຖີງຈະຜ່ານມາຫລາຍເດືອນ ແຕ່ກໍຍັງມີຄວາມໝາຍສຳຫລັບບັນດາທ່ານເຫລົ່ານີ້ ທີ່ໄດ້ເຂົ້າມາຮ່ວມສນັບສນູນງານຂອງລາວເຮົາໃຫ້ຜ່ານ ພົ້ນໄປດ້ວຍບັນຍາກາດຂອງຄວາມອົບອຸ່ນແລະຮັກແພງ "ທີ່ເຫັນທ່ານບຸນທັມ(ສິລປິນນັກແຕ່ງເພງມືນຶ່ງຂອງລາວ) ທ່ານຄຳຄູນອຸດົມສຣິວິໄລ(ນັກແຕ່ງນັກຂຽນບົດເພງ ແລະນິຍາຍຂັ້ນອາຈາຣ) ຍານາງແສງອາຣຸນ ຮ່ວມກັບ ຜູ້ຊນະເທພີສາວງາມ ປະຈຳປີ

ສາວງາມແຕ່ລະນາງໃບໜ້າ
ສົດຊື່ນແຈ່ມໃສມີສເນ່ທີ່ເປັນແບບສບັບຂອງ
ກຸລະສັຕຣີລາວທີ່ສົມບູນກັບການນຸ່ງກືຕາມຮີດ
ຕາມຄອງນຸ່ມສິ້ນບ່ຽງຜາໄໝຕາມວັທນະທັມ
ປະເພນີລາວຂອງເຮົາທຸກຢ່າງ



*Social Events!!!*

ພັລະຍາທະນາຍຄວາມອິນໂຕ ຈຳພັນ ກຳລັງຕັກບາດຂຶ້ນເຮືອນໃໝ່
ຢູ່ທີ່ເມືອງ San Marino, California





ພາບເປັນຂ່າວ: ພຣະອາຈາຣຊຶ່ງຖືກນິມົນມາຈາກວັດ ກຳລັງສູດມົນລົງຄາຖາໃຫ້ເກີດຄວາມຣົ່ມເຢັນເປັນສຸຂຢູ່ໃນງານ ກຸວາຍກອງບຸນທີ່ ຫ້ອງການທະນາຍຄວາມອິນໂຕຈຳພັນ ທີ່ Alhambra,California

# ຂ່າວສັງຄົມ

ລູກສາວທະນາຍຄວາມອິນໂຕ





ທະນາຍຄວາມອິນໂຕ ຈຳພັນພາຄອບຄົວຊຶ່ງມີພັລຍາແລະ ລູກນ້ອຍຜູ້ໜ້າຮັກອອກໄປຕາກອາກາສຢູ່ LakeTahoe ພາຍໃຕ້ ບັນຍາກາສທີ່ສົດຊື່ນແຈ່ມໃສ ພາຍຫລັງທີ່ໄດ້ມົກໝູມຢູ່ກັບວຽກງານ ມາຕລອດທັງປີກັບການຮັບໃຊ້ສັງຄົມລາວທາງດ້ານຄະດີຕ່າງໆ